ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ນະຄອນຫຼວງວຽງຈັນ, ວັນທີ 10 ກຸມພາ 2025.

# ບົດບັນທຶກກອງປະຊຸມ
# ປຶກສາຫາລືກ່ຽວກັບການພັດທະນາເວັບໄຊໃໝ່ຂອງ ຄຄຊ

ປະຊຸມປຶກສາຫາລືກ່ຽວກັບການພັດທະນາເວັບໄຊໃໝ່ຂອງ ຄຄຊ ໄດ້ຈັດຂຶ້ນໃນຕອນບ່າຍ ເວລາ 09:00 ໂມງ ຂອງວັນພະຫັດ ວັນທີ 06 ກຸມພາ 2025, ທີ່ຫ້ອງປະຊຸມ ຊັ້ນ V, ສຳນັກງານ ຄຄຊ. ເຂົ້າຮ່ວມກອງປະຊຸມຄັ້ງນີ້ປະກອບມີ: ພະແນກ ແລະ ວິຊາການ ສຄຄຊ ແລະ ຕາງໜ້າຈາກບໍລິສັດ ບໍລິສັດ ທູເຄ ຄອມພິວຕິງ ເທັກໂນໂລຊີ ຈຳກັດ ຜູ້ດຽວ ລວມທັງໝົດ 15 ທ່ານ (ລາຍຊື່ຜູ້ເຂົ້າຮ່ວມໄດ້ຄັດຕິດມາພ້ອມນີ້).

ກອງປະຊຸມ ໄດ້ຮັບຊາບຄວາມຄືບໜ້າໃນການພັດທະນາເວັບໄຊໃໝ່ຂອງ ຄຄຊ ໃນໄລຍະຜ່ານມາ ເຊິ່ງໄດ້ສຳເລັດຫຼາຍໜ້າວຽກຕາມ TOR ໃນການພັດທະນາເວັບໄຊໃໝ່ຂອງ ຄຄຊ ແລະ ປະຈຸບັນແມ່ນຄາດຄະເນວ່າ ການພັດທະນາແມ່ນສຳເລັດແລ້ວປະມານ 60%-70% ຂອງໜ້າວຽກທັງໝົດ. ເພື່ອສືບຕໍ່ຈັດຕັ້ງວຽກງານໃຫ້ມີຜົນສຳເລັດ ທີ່ປະຊຸມໄດ້ມອບໝາຍໃຫ້ ສຄຄຊ ແລະ ບໍລິສັດ ທູເຄ ຄອມພິວຕິງ ເທັກໂນໂລຊີ ຈຳກັດ ຜູ້ດຽວ ສືບຕໍ່ປະຕິບັດບັນດາໜ້າວຽກ ດັ່ງນີ້:

❖ **ສຄຄຊ**

1. ລະບົບເວັບໄຊແມ່ນອອກແບບມາໃຫ້ ສຄຄຊ ສາມາດນຳໃຊ້, ບຳລຸງຮັກສາ ແລະ ຕໍ່ຍອດໄດ້ດ້ວຍຕົນເອງ;
2. ບໍລິສັດຈະນຳສົ່ງບັນຊີ ແລະ ລະຫັດຜ່ານໃຫ້ແກ່ໜ່ວຍງານໄອທີ, ພະແນກຈັດຕັ້ງ ແລະ ບໍລິຫານ ເພື່ອເປັນສູນລວມກະຈາຍຕໍ່ໃຫ້ແກ່ແຕ່ລະພະແນກ;
3. ມອບໃຫ້ໜ່ວຍງານໄອທີສ້າງ Checklist ທາງດ້ານຂໍ້ມູນແຕ່ລະພະແນກ ເພື່ອໃຫ້ແຕ່ລະພະແນກທົດລອງ ໂດຍສະເພາະໂຄງສ້າງການເຮັດວຽກ ແລະ ຄວາມຄົບຖ້ວນຂອງຂໍ້ມູນ;
4. ມອບໃຫ້ ຕາງໜ້າຈາກແຕ່ລະພະແນກ ທົດລອງນຳໃຊ້ລະບົບເວັບໄຊທ ເບື້ອງຫຼັງ (Backend) ພ້ອມທັງກວດສອບຄວາມຄົບຖ້ວນຂອງຂໍ້ມູນ ຕາມລາຍການທີ່ພະແນກຈັດຕັ້ງ ແລະ ບໍລິຫານ ນຳສົ່ງໃຫ້ ພ້ອມທັງເກັບກຳບັນຫາຂໍ້ຄົງຄ້າງ ແລະ ນຳສົ່ງໃຫ້ ທ່ານ ວິລະວົງ ວົງມະຈັນ ພາຍໃນວັນທີ 14 ກຸມພາ 2025;
5. ໃນການເຮັດວຽກຕົວຈິງມອບໃຫ້ແຕ່ລະພະແນກເປັນເຈົ້າການໃນການອັບໂຫຼດ ແລະ ອະນຸມັດຂໍ້ມູນ ພ້ອມນັ້ນມອບໃຫ້ໜ່ວຍງານໄອທີ, ພະແນກຈັດຕັ້ງ ແລະ ບໍລິຫານ ສາມາດເຂົ້າກວດກາການເຮັດວຽກໃນທຸກພາກສ່ວນ ແລະ ແກ້ໄຂກໍລະນີຜູ້ໃຊ້ປະສົບບັນຫາໃນການເຜີຍແຜ່ຂໍ້ມູນ;

6. ມອບໃຫ້ ທ່ານ ວິລະວົງ ວົງມະຈັນ ປະສານກັບແຕ່ລະພະແນກ ເພື່ອຂໍລາຍຊື່ຈາກແຕ່ລະພະແນກຢ່າງໜ້ອຍ 2 ທ່ານ (ຄະນະພະແນກ 1 ທ່ານ ແລະ ວິຊາການ 1 ທ່ານ) ເພື່ອປະກອບເຂົ້າໃນຂໍ້ຕົກລົງກ່ຽວກັບການເຜີຍແຜ່ຂໍ້ມູນສຳລັບເວັບໄຊໃໝ່.
7. ຄາດໝາຍເບື້ອງຕົ້ນໃນການປະຊຸມເພື່ອປຶກສາຫາລືກ່ຽວກັບເວັບໄຊໃໝ່ຄັ້ງຕໍ່ໄປ ໃນວັນທີ 17 ກຸມພາ 2025.

ກອງປະຊຸມໄດ້ດຳເນີນມາເຖິງເວລາ 11:30 ໂມງ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

| <u>ປະທານກອງປະຊຸມ</u> | <u>ຜູ້ບັນທຶກກອງປະຊຸມ</u> |
| --- | --- |
| ພ. ໄລພອນ | ທ. ວິລະວົງ. |

ກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາເວັບໄຊໃໝ່ຂອງ ຄຄຊ

ວັນທີ..06/02/2025........

| ລຳດັບ | ຊື່ ແລະ ນາມສະກຸນ | ພາກສ່ວນ | ລາຍເຊັນ | ໝາຍເຫດ |
|---|---|---|---|---|
| 1 | ທ່ານ ນ. ນະໄວພອນ ພົງພະນີ | ສຄຄຊ | | |
| 2 | ບຸນວົງ ກາງຄຳ | — 〃 — | | |
| 3 | ທ່ານ ສົມພອນ ບຸນຍານ | — 〃 — | | |
| 4 | ທ່ານ ສຸລິຍະ ຈັນທະວົງ | — 〃 — | | |
| 5 | ສົມມາເພຊ ສຸລິຍະບາ | — 〃 — | | |
| 6 | ເພັດສາ ຈັນສີສຸວັນນະ | — 〃 — | | |
| 7 | ທ່ານ ນ. ວັນຸໄພ ມູລສັດ | — 〃 — | | |
| 8 | ທ່ານ ວິລະວົງ ວົງມະລັນ | — 〃 — | | |
| 9 | ທ່ານ ສົມສະໄໝ ວົງພະຈັນ | — 〃 — | | |
| 10 | ທ່ານ [illegible] | | | |
| 11 | Khamkham | ທຸສ | | 22228595 |
| 12 | ທ. ຄຳປາກູນ. | ດາກ. | | 22321177 |
| 13 | ຈິດຕະພອນ ວົງສີໄຊ | ສຄຄຊ | | |
| 14 | ທ່ານ ແສງປະເສີດ ຄຳມີ | | | |
| 15 | ທ່ານ ວິລຸນ ສົມທະວົງ | | | |
| 16 | | | | |
| 17 | | | | |
| 18 | | | | |
| 19 | | | | |
| 20 | | | | |